ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
“ສາຂາ ສົມສະໜຸກ” ເປີດຂາຍແລ້ວ ໃນວັນທີ 3 ຕຸລາ 2025

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ແມ່ນດຳເນີນທຸລະກິດຈັດຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານ ແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງວັດສະດຸຕົບແຕ່ງພາຍໃນ ເຊັ່ນ: ກະໂລ້, ສຸຂະພັນ, ນ້ຳສີ, ວັດສະດຸຕົບແຕ່ງເຮືອນ ແລະ ອາຄານສຳນັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ, ເຟີນິເຈີ ລວມທັງ ການໃຫ້ບໍລິການແບບຄົບວົງຈອນໃຫ້ແກ່ລູກຄ້າເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ, ການອອກແບບພາຍໃນຫ້ອງຄົວ - ຫ້ອງນ້ຳ, ຫຼັງຄາ ພ້ອມການປະເມີນລາຄາ, ບໍລິການຮັບຕິດຕັ້ງແບບມືອາຊີບ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ.

ໃນວັນທີ **3 ຕຸລາ 2025** ທີ່ຈະມາເຖິງນີ້, ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຈະໄດ້ມີການເປີດສາຂາໃໝ່ ຄື: **ສາຂາ ສົມສະໜຸກ** ເຊິ່ງເປັນສາຂາທີ 9 ທີ່ຕັ້ງຢູ່ ວົງວຽນໜອງໄຮ, ບ້ານສົມສະໜຸກ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ, ເພື່ອເປັນການສະຫຼອງສາຂາໃໝ່ໃນມື້ເປີດຂາຍຈະມີການຈັດໂປຣໂມຊັ່ນຫຼາຍໆຢ່າງພາຍໃນງານ ເປັນຕົ້ນກິດຈະກຳຈັບສະຫຼາກເພື່ອລຸ້ນຮັບຂອງລາງວັນຫຼາກຫຼາຍ. “ຢ່າພາດ!!! ມາຮ່ວມງານນຳກັນທີ່ ສາຂາສົມສະໜຸກ”

